*LAO*

SEATTLE PUBLIC SCHOOLS

# ໂຮງຮຽນຣັຖເມືອງຊີອາໂຕ — ໜັງສືແຈ້ງບອກກ່ຽວກັບ ສິດທິ ພາຍໃຕ້ການຄຸ້ມຄອງຂອງຍັດຕິ (ການປ່ຽນແປງ) ສິດທິຂອງເດັກນ້ອຍ (PPRA)

ພາຍໃຕ້ການຄຸ້ມຄອງຂອງຍັດຕິ ສິດທິຂອງເດັກນ້ອຍ **(PPRA)** ພໍ່ແມ່ ແລະ ນັກຮຽນ ທີ່ມີອາຍຸເກີນກວ່າ **18** ປີ (" ນັກຮຽນທີ່ໄດ້ຮັບສິດ ") ມີສິດບາງປະການ ກ່ຽວກັບວ່າ ທາງໂຮງຮຽນຣັຖເມືອງຊີອາໂຕ ທຳການສຳຫຣວດ, ເກັບກຳເອົາ ແລະ ໃຊ້ເລື້ອງສຳລັບຈຸດປະສົງທາງດ້ານການຕະຫລາດ , ແລະ ການກວດກາດ້ານຮ່າງກາຍບາງຢ່າງ ຄືແນວໃດ . ອັນນີ້ ກວມລວມທັງສິດທິ ທີ່ຈະ :

• *ຍິນຍອມ*ກ່ອນນັກຮຽນຈຳເປັນຕ້ອງໄດ້ຍື່ນໃບສຳຫຣວດ ຊຶ່ງກັງວົນ ກ່ຽວກັບ ພື້ນທີ່ທີ່ໄດ້ປົກປ້ອງຮັກສາອັນນຶ່ງ ຫລື ຫລາຍກວ່າ ດັ່ງຕໍ່ລົງໄປນີ້ (" ການສຳຫຣວດເລື້ອງທີ່ໄດ້ປົກປ້ອງຮັກສາ ") ຖ້າການສຳຫຣວດໄດ້ຖືກພົບເຫັນ ທັງໝົດ ຫລື ສ່ວນໃດນຶ່ງ ໂດຍການຂອງກະຊວງສຶກສາທິການຂອງສະຫະຣັຖ (ED)–

1. ການຜູກພັນທາງການເມືອງ ຫລື ທາງສາສນາ ຂອງນັກຮຽນ ຫລື ພໍ່ແມ່ນັກຮຽນ;
2. ບັນຫາດ້ານສະໝອງ ຫລື ດ້ານຈິດຕະວິທຍາ ຂອງນັກຮຽນ ຫລື ຄອບຄົວຂອງນັກຮຽນ ;
3. ຄວາມປະພຶດທາງເພດ ຫລື ກິຣິຍາທ່າທາງ;
4. ຄວາມປະພຶດທີ່ຜິດກົດໝາຍ, ຕໍ່ຕ້ານສັງຄົມ, ດູ່ຫາໃສ່ຕົວເອງ, ຫລື ກິຣິຍາດີ;
5. ຕີລາຄາແບບຕິຕຽນຂອງຄົນອື່ນ ຊຶ່ງດ້ວຍຜູ້ຕອບໂຕ້ ມີການກ່ຽວພັນທີ່ໃກ້ຊິດກັບຄອບຄົວ;
6. ສາຍພົວພັນທີ່ໄດ້ຮັບສິດແບບຮັບຮູ້ຢ່າງຖືກຕ້ອງຕາມກົດໝາຍ, ເຊັ່ນກັບ ທະນາຍຄວາມ, ນາຍໝໍ, ຫລື ຄຸນພໍ່ໂບດ;
7. ການປະຕິບັດທາງສາສນາ, ການຜູກພັນ, ຫລື ຄວາມເຊື່ອຂອງນັກຮຽນ ຫລື ພໍ່ແມ່, ຫລື
8. ລາຍໄດ້, ທີ່ນອກເໜືອຈາກໄດ້ຖືກຮຽກຮ້ອງເອົາ ໂດຍກົດໝາຍ ເພື່ອຕັດສິນເລື້ອງຄວາມໄດ້ຮັບສິດຂອງໂຄງການ.

• *ໄດ້ຮັບໃບແຈ້ງ ແລະ ໂອກາດ ທີ່ໃຫ້ຍົກຖອນນັກຮຽນອອກ* –

1. ການສຳຫຣວດເລື້ອງທີ່ໄດ້ປົກປ້ອງຮັກສາຢ່າງອື່ນໆອີກ , ໂດຍບໍ່ກ່ຽວກັບກ້ອນທຶນ;
2. ການບໍ່ແມ່ນແບບສຸກເສີນໃດໆ, ການກວດກາເບິ່ງຮ່າງກາຍ ຫລື ກວດພະຍາດ ແບບຮຸກຮານ ທີ່ຈຳເປັນ ຕາມເງື່ອນໄຂຂອງການມາເຂົ້າຮ່ວມ, ບໍຣິຫານໂດຍທາງໂຮງຮຽນ ຫລື ອົງການໂຮງຮຽນເອງ , ແລະ ບໍ່ຈຳເປັນທີ່ຈະປົກປ້ອງຮັກສາສຸຂະພາບ ແລະ ຄວາມປອດໄພແບບກະທັນຫັນ ຂອງນັກຮຽນ, ເວັ້ນເສັຍແຕ່ ສຳລັບການເບິ່ງຫູ, ສາຍຕາ, ຫລື ກວດກະດູກສັນຫລັງ, ຫລື ກວດຮ່າງກາຍ ຫລື ກວດກາພະຍາດ ທີ່ໄດ້ອະນຸຍາດແລ້ວ ຫລື ພາຍໃຕ້ ກົດໝາຍຂອງຣັຖ, ແລະ
3. ກິຈກັມຕ່າງໆ ທີ່ກ່ຽວຂ້ອງກັບການເກັບກຳເອົາ, ການເປີດເຜີຍ, ຫລື ການໃຊ້ເລື້ອງສ່ວນຕົວທີ່ມີ ຈາກນັກຮຽນ ສຳລັບການຕະຫລາດ ຫລື ຂາຍ ຫລື ບໍ່ດັ່ງນັ້ນ ກໍແຈກຢາຍ ເລື້ອງໃຫ້ແກ່ຜູ້ອື່ນ.

• *ກວດກາ* ຕາມການຂໍຮ້ອງ ແລະ ກ່ອນວຽກປົກຄອງ ຫລື ໃຊ້ –

1. ການສຳຫຣວດຕ່າງໆຂອງເລື້ອງທີ່ໄດ້ປົກປ້ອງແລ້ວຂອງນັກຮຽນ;
2. ເຄື່ອງອຸປະກອນທີ່ໃຊ້ ເພື່ອເກັບກຳເອົາເລື້ອງສ່ວນຕົວ ຈາກນັກຮຽນ ສຳລັບສິ່ງໃດຫຂອງການຕະຫລາດຂ້າງເທິງນີ້, ຂາຍ, ຫລື ຈຸດປະສົງ ແຈກຢາຍອື່ນໆ; ແລະ
3. ອຸປະກອນສິດສອນ ໃຊ້ເປັນສ່ວນນຶ່ງຂອງຫລັກສູດການສຶກສາ.

ໂຮງຮຽນຣັຖເມືອງຊີອາໂຕ ກຳລັງດຳເນີນການພັທນານະໂຍບາຍຕ່າງໆ, ໃນການຮ່ວມປຶກສາຫາລືກັບ ບັນດາພໍ່ແມ່ ກ່ຽວກັບສິດທິເຫລົ່ານີ້, ທັງຍັງຈັດແຈງ ເພື່ອປົກປ້ອງຮັກສາຄວາມຢູ່ສັນໂດດຂອງນັກຮຽນ ໃນການປົກຄອງຂອງການສຳຫຣວດ ເລື້ອງທີ່ໄດ້ປົກ

<u>*LAO*</u>

ປ້ອງແລ້ວ ແລະ ການເກັບກຳ, ການເປີດເຜີຍ, ຫລື ການໃຊ້ ເລື້ອງສ່ວນຕົວ ສຳລັບການຕະຫລາດ, ຄ້າຂາຍ, ຫລື ຈຸດປະສົງຂອງການແຈກຢາຍອື່ນໆ.

ທາງໂຮງຮຽນຣັຖເມືອງຊີອາໂຕ ຈະແຈ້ງບອກບັນດາພໍ່ແມ່ ໂດຍກົງໂລດ ກ່ຽວກັບນະໂຍບາຍຕ່າງໆເຫລົ່ານີ້ ຢ່າງໜ້ອຍປີລະຄັ້ງ ໃນຕອນເລີ່ມເປີດສົກຮຽນແຕ່ລະປີ ແລະ ຫລັງຈາກ ການປ່ຽນແປງຢ່າງໃຫຍ່ຫລວງໃດໆ. ທາງໂຮງຮຽນຣັຖເມືອງຊີອາໂຕ ຍັງຈະແຈ້ງບອກໂດຍກົງເຊັ່ນກັນ ເຊັ່ນຜ່ານທາງໄປສະນີຂອງສະຫະຣັຖ ຫລື ທາງອີເມ, ພໍ່ແມ່ຂອງນັກຮຽນ ຜູ້ທີ່ມາຮ່ວມຕາມຕາຕະລາງ ເພື່ອປະກອບສ່ວນເຂົ້າ ໃນກິຈກັມຕ່າງໆສະເພາະນັ້ນ ຫລື ການສຳຫຣວດ ທີ່ບອກໄວ້ຢູ່ຂ້າງລຸ່ມນີ້ ແລະ ຈະອຳນວຍໃຫ້ມີໂອກາດ ອັນດີ ສຳລັບພໍ່ແມ່ ທີ່ຈະເລືອກຖອນອອກໄດ້ ເດັກນ້ອຍຂອງຕົນ ຈາກກິຈກັມສະເພາະ ຫລື ການສຳຫຣວດນັ້ນ. ທາງໂຮງຮຽນຣັຖເມືອງຊີອາໂຕ ຈະເຮັດການແຈ້ງບອກ ໄປຫາພໍ່ແມ່ ໃນຕອນເລີ່ມຕົ້ນສົກຮຽນ ຖ້າທາງເຂດສຶກສາໄດ້ພົບວັນທີສະເພາະ ຫລື ກະປະມານ ກ່ຽວກັບກິຈກັມຕ່າງໆ ຫລື ການສຳຫຣວດ ໃນເວລານັ້ນ. ສຳລັບການສຳຫຣວດ ແລະ ກິຈກັມຕ່າງໆ ທີ່ໄດ້ອອກຕາຕະລາງ ຫລັງຈາກສົກຮຽນໄດ້ເລີ່ມເປີດແລ້ວນັ້ນ ບັນດາພໍ່ແມ່ ກໍຈະໄດ້ຮັບໜັງສືແຈ້ງບອກຢ່າງມີເຫດຜົນ ກ່ຽວກັບກິຈກັມທີ່ໄດ້ວາງແຜນ ການແລ້ວນັ້ນ ແລະ ການສຳຫຣວດນັ້ນ, ແລະ ຈະໄດ້ຮັບອຳນວຍຄວາມສະດວກ ມີໂອກາດ ໃຫ້ເລືອກຖອນເດັກນ້ອຍຂອງຕົນອອກຈາກ ກິຈກັມ ແລະ ການສຳຫຣວດເຊັ່ນວ່ານັ້ນ. ພໍ່ແມ່ຍັງຈະໄດ້ຮັບອຳນວຍຄວາມສະດວກ ໃນການກວດເບິ່ງຄືນ ການສຳຫຣວດທີ່ເຂົ້າກັບເລື້ອງໃດໆ.

*ພໍ່ແມ່ ຜູ້ທີ່ເຊື່ອວ່າສິດທິຂອງຕົນໄດ້ຖືກລ່ວງລະເມີດໄປ ກໍອາດຂໍຮ້ອງຟ້ອງໄດ້ ກັບ*:

Family Policy Compliance Office
U.S. Department of Education
400 Maryland Avenue, SW
Washington, D.C. 20202

ຟອມນີ້ ແມ່ນສຳລັບເປັນເລື້ອງໃຫ້ທ່ານຮູ້ເທົ່ານັ້ນ. ທ່ານບໍ່ຈຳເປັນຕ້ອງເອົາສິ່ງຄືນໄປຫາໂຮງຮຽນຂອງນັກຮຽນທ່ານ.